ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ　　　　　　　　　　　　　　　　ເລກທີ 580/ທຫລ

ນະຄອນຫຼວງວຽງຈັນ, ວັນທີ 08 ກໍລະກົດ 2019

# ຂໍ້ຕົກລົງ

## ວ່າດ້ວຍການນຳເງິນ ເຂົ້າ-ອອກ ສປປ ລາວ ຂອງທະນາຄານທຸລະກິດ

- ອີງຕາມ ກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ສະບັບເລກທີ 55/ສພຊ, ລົງວັນທີ 22 ທັນວາ 2014;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການໂອນເງິນເຂົ້າ-ອອກ ປະເທດ ຂອງ ທະນາຄານທຸລະກິດ ສະບັບເລກທີ 433/ທຫລ, ລົງວັນທີ 06 ມິຖຸນາ 2011;
- ອີງຕາມ ແຈ້ງການ ກ່ຽວກັບການໂອນເງິນເຂົ້າປະເທດ ຂອງທະນາຄານທຸລະກິດ ແລະ ສະຖາບັນການເງິນ ສະບັບເລກທີ 493/ທຫລ, ລົງວັນທີ 28 ທັນວາ 2016;
- ອີງຕາມ ການຄົ້ນຄວ້າ ແລະ ນຳສະເໜີຂອງກົມນະໂຍບາຍເງິນຕາ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ ຕົກລົງ:**

### ໝວດທີ 1
### ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດ ບັນດາຫຼັກການ, ລະບຽບການ ແລະ ຂັ້ນຕອນໃນການນຳເງິນ ເຂົ້າ-ອອກ ສປປ ລາວ ຂອງ ທະນາຄານທຸລະກິດ ເພື່ອຄຸ້ມຄອງການດຳເນີນທຸລະກຳຂອງທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດ ໃຫ້ສອດຄ່ອງຕາມລະບຽບກົດໝາຍ ແລະ ເປັນເອກະພາບໃນການຈັດຕັ້ງປະຕິບັດ, ແນໃສ່ເຮັດໃຫ້ການຈັດຕັ້ງປະຕິບັດການຄຸ້ມຄອງເງິນຕາຕ່າງປະເທດ ສອດຄ່ອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ແລະ ປະກອບສ່ວນໃນການຄຸ້ມຄອງເງິນຕາຕ່າງປະເທດໃຫ້ມີປະສິດທິຜົນ.

**ມາດຕາ 2 ການນຳເງິນເຂົ້າ-ອອກ ສປປ ລາວ**

ການນຳເງິນເຂົ້າ-ອອກ ສປປ ລາວ ແມ່ນການໂອນເງິນ ຫຼື ການນຳເງິນສົດ ເຂົ້າ-ອອກ ສປປ ລາວ ຂອງທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດ, ຊຶ່ງການໂອນເງິນ ເຂົ້າ-ອອກ ສປປ ລາວ ແມ່ນການໂອນ

ເງິນລະຫວ່າງປະເທດ ໂດຍນຳໃຊ້ລະບົບການໂອນເງິນລະຫວ່າງປະເທດ ແລະ ການນຳເງິນສົດເຂົ້າ-ອອກ ສປປ ລາວ ແມ່ນການດຳເນີນການເຄື່ອນຍ້າຍເງິນສົດລະຫວ່າງປະເທດ ໂດຍຜ່ານດ່ານສາກົນ.

ການນຳເງິນ ເຂົ້າ-ອອກ ສປປ ລາວ ຂອງທະນາຄານທຸລະກິດ ຕ້ອງປະຕິບັດສອດຄ່ອງຕາມກົດໝາຍ ແລະ ລະບຽບການທີ່ທະນາຄານແຫ່ງ ສປປ ລາວ ກຳນົດອອກໃນແຕ່ລະໄລຍະ.

**ມາດຕາ 3 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດ ທີ່ໄດ້ຮັບອະນຸຍາດດຳເນີນທຸລະກິດ ຢ່າງຖືກຕ້ອງຕາມກົດໝາຍ ຢູ່ ສປປ ລາວ.

## ໝວດທີ 2
## ການດຳເນີນທຸລະກຳ ນຳເງິນ ເຂົ້າ-ອອກ ສປປ ລາວ

**ມາດຕາ 4 ການໂອນເງິນ ເຂົ້າ ສປປ ລາວ**

ທະນາຄານທຸລະກິດ ທີ່ຕ້ອງການໂອນເງິນຕາຕ່າງປະເທດເຂົ້າ ສປປ ລາວ ເພື່ອຮອງຮັບການດຳເນີນທຸລະກິດ ສາມາດໂອນເງິນເຂົ້າບັນຊີເງິນຝາກຂອງຕົນທີ່ເປີດຢູ່ ກົມບໍລິການທະນາຄານ ໂດຍບໍ່ຕ້ອງຂໍອະນຸຍາດຈາກກົມນະໂຍບາຍເງິນຕາ ແຕ່ທະນາຄານທຸລະກິດຕ້ອງລາຍງານຂໍ້ມູນການໂອນເງິນເຂົ້າ ສປປ ລາວ ໃຫ້ກົມນະໂຍບາຍເງິນຕາຊາບ ເປັນປະຈຳທຸກອາທິດ.

ທະນາຄານທຸລະກິດ ຕ້ອງລາຍງານການໂອນເງິນເຂົ້າ ສປປ ລາວ ຂອງຕົນ ທີ່ໂອນຜ່ານລະບົບຂອງກົມບໍລິການທະນາຄານ ແລະ ໂອນຜ່ານລະບົບຂອງທະນາຄານເອງ ຢ່າງເປັນລາຍລັກອັກສອນ ແລະ ສົ່ງລາຍງານການໂອນເງິນເຂົ້າດັ່ງກ່າວ ໃຫ້ກົມນະໂຍບາຍເງິນຕາ ພາຍໃນວັນຈັນ ຂອງອາທິດຕໍ່ມາ.

**ມາດຕາ 5 ການໂອນເງິນ ອອກ ສປປ ລາວ**

ທະນາຄານທຸລະກິດ ທີ່ຕ້ອງການໂອນເງິນຕາຕ່າງປະເທດອອກ ສປປ ລາວ ຕ້ອງຂໍອະນຸຍາດຈາກກົມນະໂຍບາຍເງິນຕາກ່ອນ ທຸກຄັ້ງ ແລະ ການສະເໜີຂໍອະນຸຍາດໂອນເງິນອອກ ສປປ ລາວ ຕ້ອງຄັດຕິດເອກະສານຢັ້ງຢືນການໂອນເງິນ ໂດຍຈຳນວນເງິນ, ສະກຸນເງິນ ແລະ ຈຸດປະສົງ ທີ່ລະບຸໄວ້ໃນເອກະສານຄັດຕິດທີ່ຍື່ນສະເໜີຂໍໂອນເງິນຕ້ອງສອດຄ່ອງຕາມແຕ່ລະຈຸດປະສົງ ຢ່າງຖືກຕ້ອງ ແລະ ຄົບຖ້ວນ, ຊຶ່ງການໂອນເງິນອອກ ສປປ ລາວ ຕ້ອງຍື່ນໜັງສືສະເໜີຕາມແບບພິມຂອງ ກົມນະໂຍບາຍເງິນຕາ ແລະ ປະກອບເອກະສານຄັດຕິດຕາມແຕ່ລະກໍລະນີ ດັ່ງນີ້:

1. ການໂອນຊຳລະສະສາງ ຄ່າສິນຄ້າ-ບໍລິການ ແລະ ການລົງທຶນ ໃຫ້ແກ່ລູກຄ້າ

ການໂອນເງິນອອກ ສປປ ລາວ ທຸກຄັ້ງ ຕ້ອງຄັດຕິດເອກະສານຢັ້ງຢືນການໂອນເງິນຂອງລູກຄ້າ ທີ່ສອດຄ່ອງຕາມເປົ້າໝາຍການນຳໃຊ້ເງິນຕາຕ່າງປະເທດ ທີ່ໄດ້ກຳນົດໄວ້ໃນມາດຕາ 10 ວັກ 1 ຂອງກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ແລະ ລະບຽບການທີ່ກ່ຽວຂ້ອງທີ່ ທຫລ ກຳນົດອອກໃນແຕ່ລະໄລຍະ, ພ້ອມທັງ ສົ່ງ

ລວມຂໍ້ມູນການໂອນເງິນຢ່າງລະອຽດເປັນຕາຕະລາງຕາມແບບພິມຂອງ ກົມນະໂຍບາຍເງິນຕາ. ກໍລະນີການຊໍາລະຄ່າສິນຄ້າ-ບໍລິການ ຫຼື ການຊໍາລະເງິນກູ້ຢືມຈາກຕ່າງປະເທດຂອງລູກຄ້າ ຫາກມີການແບ່ງຊໍາລະເປັນຫຼາຍງວດ ທະນາຄານທຸລະກິດຕ້ອງໃຫ້ລູກຄ້າສັງລວມການຊໍາລະໃນໄລຍະຜ່ານມາ ພ້ອມທັງເອກະສານຢັ້ງຢືນການໂອນຊໍາລະດັ່ງກ່າວ ເພື່ອເປັນຂໍ້ມູນໃຫ້ກົມນະໂຍບາຍເງິນຕາຊາບ.

2. ການໂອນຊໍາລະເງິນກູ້ ຈາກຕ່າງປະເທດ ຂອງທະນາຄານທຸລະກິດ ຕ້ອງປະກອບເອກະສານຄັດຕິດ ດັ່ງນີ້:
   - ສໍາເນົາໜັງສືອະນຸຍາດກູ້ຢືມເງິນຈາກຕ່າງປະເທດ ທີ່ອອກໂດຍກົມຄຸ້ມຄອງທະນາຄານທຸລະກິດ;
   - ສໍາເນົາເອກະສານຫຼັກຖານການປະຕິບັດພັນທະອາກອນດອກເບັ້ຍເງິນກູ້ບ້ວງດັ່ງກ່າວ ຫຼື ສໍາເນົາໃບຢັ້ງຢືນການປະຕິບັດພັນທະດ້ານອາກອນ ທີ່ອອກໂດຍພາກສ່ວນທີ່ກ່ຽວຂ້ອງ (ຖ້າມີ).

3. ການໂອນເງິນປັນຜົນໃຫ້ຂາຮຸ້ນທີ່ຢູ່ຕ່າງປະເທດ ຂອງທະນາຄານທຸລະກິດ ແລະ ໂອນເງິນກໍາໄລຂອງສາຂາທະນາຄານທຸລະກິດຕ່າງປະເທດກັບຄືນສໍານັກງານໃຫຍ່ ຕ້ອງປະກອບເອກະສານຄັດຕິດ ດັ່ງນີ້:
   - ສໍາເນົາໜັງສືອະນຸຍາດໂອນກໍາໄລ ຫຼື ເງິນປັນຜົນ ອອກ ສປປ ລາວ ອອກໂດຍກົມຄຸ້ມຄອງທະນາຄານທຸລະກິດ;
   - ສໍາເນົາໃບຢັ້ງຢືນການປະຕິບັດພັນທະດ້ານອາກອນທີ່ກ່ຽວຂ້ອງກັບເງິນປັນຜົນຂອງຂາຮຸ້ນ ໃນກໍລະນີໂອນເງິນປັນຜົນໃຫ້ຂາຮຸ້ນຢູ່ຕ່າງປະເທດ (ຖ້າມີ).

4. ການໂອນເງິນອອກ ສປປ ລາວ ເພື່ອຈຸດປະສົງອື່ນ ທີ່ບໍ່ໄດ້ກໍານົດຈຸດປະສົງໄວ້ໃນມາດຕານີ້ ທະນາຄານທຸລະກິດ ຕ້ອງປະກອບເອກະສານຄັດຕິດທີ່ກ່ຽວຂ້ອງຕາມຈຸດປະສົງໃນການສະເໜີຂໍໂອນເງິນອອກ ສປປ ລາວ ຢ່າງຖືກຕ້ອງ ແລະ ຄົບຖ້ວນ ສອດຄ່ອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 6 ການນໍາເງິນສົດ ເຂົ້າ-ອອກ ສປປ ລາວ**

ທະນາຄານທຸລະກິດ ທີ່ຕ້ອງການນໍາເງິນສົດ ເຂົ້າ-ອອກ ສປປ ລາວ ຕ້ອງຂໍອະນຸຍາດຈາກກົມນະໂຍບາຍເງິນຕາກ່ອນ ທຸກຄັ້ງ ໂດຍຍື່ນໜັງສືສະເໜີຂໍອະນຸຍາດຕາມແບບພິມຂອງທະນາຄານແຫ່ງ ສປປ ລາວ ແລະ ປະກອບຂໍ້ມູນການເຄື່ອນຍ້າຍເງິນສົດດັ່ງກ່າວ ຢ່າງຈະແຈ້ງ, ຖືກຕ້ອງ ແລະ ຄົບຖ້ວນ, ພ້ອມທັງ ຄັດຕິດເອກະສານທີ່ກ່ຽວຂ້ອງ ເພື່ອສະເໜີກົມນະໂຍບາຍເງິນຕາ ຄົ້ນຄວ້າພິຈາລະນາ.

ທະນາຄານທຸລະກິດທີ່ໄດ້ຮັບອະນຸຍາດນໍາເງິນສົດ ເຂົ້າ-ອອກ ສປປ ລາວ ຕ້ອງລາຍງານການເຄື່ອນຍ້າຍເງິນສົດດັ່ງກ່າວ ໃຫ້ກົມນະໂຍບາຍເງິນຕາຊາບ ພາຍຫຼັງເຄື່ອນຍ້າຍສໍາເລັດ ພາຍໃນກໍານົດເວລາ 02 ວັນລັດຖະການ.

**ມາດຕາ 7 ການພິຈາລະນາອະນຸຍາດ**

ກົມນະໂຍບາຍເງິນຕາ ມີໜ້າທີ່ຄົ້ນຄວ້າພິຈາລະນາການໂອນເງິນອອກ ແລະ ການນໍາເງິນສົດ ເຂົ້າ-ອອກ ສປປ ລາວ ຕາມການສະເໜີຂອງທະນາຄານທຸລະກິດ ບົນພື້ນຖານການປະກອບເອກະສານ ຖືກຕ້ອງ ແລະ ຄົບຖ້ວນຕາມແຕ່ລະຈຸດປະສົງ ແລະ ສອດຄ່ອງຕາມກົດໝາຍ ແລະ ລະບຽບການທີ່ທະນາຄານແຫ່ງ ສປປ ລາວ ກໍານົດ.

ກົມນະໂຍບາຍເງິນຕາ ຈະຄົ້ນຄວ້າພິຈາລະນາ ແລະ ອອກໜັງສືອະນຸຍາດການໂອນເງິນອອກ ແລະ ການນໍາເງິນສົດ ເຂົ້າ-ອອກ ສປປ ລາວ ໃຫ້ແກ່ທະນາຄານທຸລະກິດ ທີ່ປະກອບເອກະສານຖືກຕ້ອງ ແລະ ຄົບຖ້ວນ ພາຍໃນກໍານົດເວລາ 01 ວັນລັດຖະການ.

ທະນາຄານແຫ່ງ ສປປ ລາວ ສາມາດຮຽກເອົາເອກະສານອື່ນ ທີ່ກ່ຽວຂ້ອງກັບການນໍາເງິນ ເຂົ້າ-ອອກ ສປປ ລາວ ຕາມການພິຈາລະນາ ທີ່ເຫັນວ່າມີຄວາມຈໍາເປັນ.

**ມາດຕາ 8 ຄ່າບໍລິການໂອນເງິນ ເຂົ້າ-ອອກ ສປປ ລາວ**

ຄ່າບໍລິການໂອນເງິນ ເຂົ້າ-ອອກ ສປປ ລາວ ທະນາຄານທຸລະກິດ ຕ້ອງປະຕິບັດຕາມລະບຽບການທີ່ກົມບໍລິການທະນາຄານ ກໍານົດອອກໃນແຕ່ລະໄລຍະ.

## ໝວດທີ 3
## ບົດບັນຍັດສຸດທ້າຍ

**ມາດຕາ 9 ການຈັດຕັ້ງປະຕິບັດ**

ກົມນະໂຍບາຍເງິນຕາ, ກົມບໍລິການທະນາຄານ, ກົມຄຸ້ມຄອງທະນາຄານທຸລະກິດ ມີໜ້າທີ່ຕິດຕາມການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້.

ທະນາຄານທຸລະກິດ ແລະ ສາຂາທະນາຄານຕ່າງປະເທດ ມີໜ້າທີ່ຈັດຕັ້ງປະຕິບັດຕາມຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 10 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນຂໍ້ຕົກລົງວ່າດ້ວຍການໂອນເງິນເຂົ້າ-ອອກ ປະເທດ ຂອງ ທະນາຄານທຸລະກິດ ສະບັບເລກທີ 433/ທຫລ, ລົງວັນທີ 06 ມິຖຸນາ 2011 ແລະ ແຈ້ງການ ກ່ຽວກັບການໂອນເງິນເຂົ້າປະເທດ ຂອງທະນາຄານທຸລະກິດ ແລະ ສະຖາບັນການເງິນ ສະບັບເລກທີ 493/ທຫລ, ລົງວັນທີ 28 ທັນວາ 2016.

ບັນດາຂໍ້ຕົກລົງ ແລະ ລະບຽບການທີ່ນໍາໃຊ້ໃນເມື່ອກ່ອນ ຫາກຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ຜູ້ວ່າການທະນາຄານແຫ່ງ ສປປ ລາວ

ທະນາຄານແຫ່ງ ສ.ປ.ປ. ລາວ
ຜູ້ວ່າການ

ສອນໄຊ ສິດພະໄຊ